**ກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ຄັ້ງທີ່ 13 ແລະ ກອງປະຊຸມປິ່ນອ້ອມອື່ນໆ (13th ASEAN Finance Ministers' and Central Bank Governors' Meeting and Related Events) ໃນລະຫວ່າງວັນທີ 7-10 ເມສາ 2026 ໃນຮູບແບບທາງໄກ**




ກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ແລະ ກອງປະຊຸມປິ່ນອ້ອມອື່ນໆ (13th ASEAN Finance Ministers' and Central Bank Governors' Meeting and Related Events) ໄດ້ໄຂຂຶ້ນຢ່າງເປັນທາງການ ໃນລະຫວ່າງວັນທີ 7-10 ເມສາ 2026 ໃນຮູບແບບທາງໄກ ໂດຍການເປັນປະທານ ແລະ ເຈົ້າພາບຮ່ວມຂອງກະຊວງການເງິນ ແລະ ທະນາຄານກາງ ຟີລິບປິນ ໃນນາມປະທານອາຊຽນປີ 2026 ຈັດຂຶ້ນພາຍໃຕ້ຄຳຂວັນ: "ນຳທາງອະນາຄົດຂອງພວກເຮົາໄປດ້ວຍກັນ". ໃນນີ້, ທະນາຄານແຫ່ງ ສປປ ລາວ ນຳພາຄະນະເຂົ້າຮ່ວມໂດຍ ທ່ານ ສຸລີສັກ ທຳນຸວົງ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ, ມີຜູ້ຕາງໜ້າການນຳຂັ້ນສູງຂອງກະຊວງການເງິນ ແລະ ທະນາຄານກາງຂອງບັນດາ 11 ປະເທດອາຊຽນ ແລະ ອາຊຽນ+3, ກອງເລຂາອາຊຽນ ແລະ ອົງການຈັດຕັ້ງທາງການເງິນສາກົນທີ່ກ່ຽວຂ້ອງຈຳນວນໜຶ່ງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ ໄດ້ຮັບຮອງເອົາຫຼາຍບັນຫາສຳຄັນເປັນຕົ້ນແມ່ນ ແຜນບູລິມະສິດພາຍໃຕ້ເສົາຄ້ຳເສດຖະກິດຂອງປະທານອາຊຽນ (PEDs) ປະຈຳປີ 2026, ບັນດາຂໍ້ລິເລີ່ມ ແລະ ແຜນສະເໜີການຈັດຕັ້ງປະຕິບັດໃນຕໍ່ໜ້າຂອງບັນດາຄະນະກຳມະການ ແລະ ໜ່ວຍງານພາຍໃຕ້ວຽກງານການເຊື່ອມໂຍງທາງດ້ານວຽກງານການເງິນ-ເງິນຕາອາຊຽນ, ຂໍ້ລິ

ເລີ່ມ Project Revive ແລະ ໂຄງການການຮ່ວມມືລະຫວ່າງອາຊຽນ ແລະ ທະນາຄານພັດທະນາອາຊີ ໃຫ້ກາຍເປັນຄູ່ຮ່ວມມືທາງຍຸດທະສາດໄລຍະຍາວ ແລະ ການຮັບຮອງເອົາຖະແຫຼງການຮ່ວມຂອງລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ຄັ້ງທີ 13. ນອກນີ້, ກອງປະຊຸມກໍ່ໄດ້ປຶກສາຫາລືຮ່ວມກັນຕໍ່ກັບບັນຫາທີ່ໄດ້ສົ່ງຜົນກະທົບຕໍ່ກັບສະພາບການທາງດ້ານເສດຖະກິດມະຫາພາກຢູ່ພາກພື້ນ ແລະ ສາກົນ ແລະ ບັນຫາອື່ນໆທີ່ຕິດພັນກັບການປຶກສາຫາລືລະຫວ່າງ ຜູ້ວ່າການທະນາຄານກາງອາຊຽນ ກັບ ບັນດາຜູ້ບໍລິຫານຂອງສະຖາບັນການເງິນ ແລະ ສະພາທີ່ປຶກສາທາງດ້ານທຸລະກິດຂອງອາຊຽນ, ສ. ອາເມລິກາ ແລະ ເອີຣົບ.







ພ້ອມດຽວກັນນັ້ນ, ຄະນະຂອງ ທະນາຄານແຫ່ງ ສປປ ລາວ ກໍ່ໄດ້ເຂົ້າຮ່ວມກອງປະຊຸມຂັ້ນຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງ ອາຊຽນ+3 ພາຍໃຕ້ການເປັນປະທານຮ່ວມລະຫວ່າງ ກະຊວງການເງິນ ແລະ ທະນາຄານກາງ ຂອງ ປະເທດ ຟີລິບປິນ ແລະ ຍີ່ປຸ່ນ ເຊິ່ງເປັນກອງປະຊຸມຄັ້ງທຳອິດຂອງຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າການທະນາຄານກາງ ອາຊຽນ+3 ປະຈຳປີ 2026. ໂດຍມີການນຳຂັ້ນສູງຈາກກະຊວງການເງິນ ແລະ ທະນາຄານກາງ ຂອງບັນດາປະເທດ ອາຊຽນ+3, ກອງເລຂາອາຊຽນ ແລະ ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງເຂົ້າຮ່ວມ. ຈຸດປະສົງຂອງກອງປະຊຸມດັ່ງກ່າວແມ່ນເພື່ອແນໃສ່ປຶກສາຫາລື ແລະ ຮັບຮອງບັນດາໜ້າວຽກຕ່າງໆທີ່ຕິດພັນກັບການພັດທະນາຄວາມໝັ້ນຄົງດ້ານການເງິນຂອງພາກພື້ນ ອາຊຽນ+3 ໂດຍສະເພາະການແລກປ່ຽນທັດສະນະກ່ຽວກັບການກຳນົດນະໂຍບາຍການເງິນ-ເງິນຕາຂອງບັນດາປະເທດສະມາຊິກ ແລະ ການໃຫ້ຄຳແນະນຳທາງດ້ານນະໂຍບາຍຈາກອົງການຈັດຕັ້ງສາກົນ ເພື່ອປ້ອງກັນ ແລະ ຮັບມື ກັບບັນຫາສິ່ງທ້າທາຍໃນທ່າມກາງຄວາມບໍ່ແນ່ນອນຂອງໂລກປະຈຸບັນທີ່ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດໃນການຮັກສາສະຖຽນລະພາບທາງດ້ານການເງິນ ແລະ ການເຊື່ອມໂຍງໃນພາກພື້ນ. ພ້ອມນີ້, ກອງປະຊຸມກໍ່ໄດ້ມີການປຶກສາຫາລື ແລະ ຮັບຮອງບາງບັນຫາທີ່ສຳຄັນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຂະບວນການເງິນອາຊຽນ+3 ເປັນຕົ້ນ ການເສີມຂະຫຍາຍວຽກງານການຮ່ວມມືຫຼາຍຝ່າຍພາຍໃຕ້ຂໍ້ລິເລີ່ມຊຽງໃໝ່ (CMIM) ເພື່ອຍົກລະດັບຄວາມໜ້າເຊື່ອຖືໃຫ້ແກ່ກອງທຶນດັ່ງກ່າວໃນໄລຍະເກີດການກູ້ຢືມຕົວຈິງ ໂດຍສະເພາະການປະກອບທຶນ; ສະໜັບສະໜູນການຄຸ້ມຄອງອົງກອນ ແລະ ຜົນການຈັດຕັ້ງປະຕິບັດງານຂອງອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 (AMRO) ໃນນາມເປັນກອງເລຂາຊຸກຍູ້ວຽກງານການເງິນອາຊຽນ+3; ຄວາມຄືບໜ້າໃນການກຳນົດທິດທາງໃນຕໍ່ໜ້າວຽກງານຂະບວນການເງິນອາຊຽນ+3; ຮັບຮອງແຜນແມ່ບົດເບື້ອງຕົ້ນຂອງຕະຫຼາດພັນທະບັດອາຊີ (ABMI) ແລະ ຄວາມຄືບໜ້າວຽກງານການສະໜອງທຶນເພື່ອປ້ອງກັນຄວາມສ່ຽງຈາກການເກີດໄພພິບັດທາງທຳມະຊາດ (DRF).

ກອງປະຊຸມຄັ້ງນີ້ ໄດ້ດໍາເນີນເປັນເວລາ 4 ວັນເຕັມ ແລະ ໄດ້ປິດລົງດ້ວຍຜົນສໍາເລັດຢ່າງຈົບງາມ ທ່າມກາງບັນຍາກາດ ການເປັນປະທານ ແລະ ເຈົ້າພາບຈັດກອງປະຊຸມອາຊຽນ ແລະ ອາຊຽນ+3 ຂອງປະເທດ ຟີລິບປິນ ປະຈໍາປີ 2026, ການປະກອບຄໍາເຫັນ ແລະ ໃຫ້ທິດຊີ້ນໍາຢ່າງກົງໄປກົງມາຈາກບັນດາການນໍາຂັ້ນສູງຂອງບັນດາຂະແໜງການເງິນ, ທະນາຄານອາຊຽນ ແລະ ອາຊຽນ+3, ໂດຍລວມ ບັນດາຜູ້ແທນສາມາດເປັນເອກະພາບຕໍ່ກັບບັນຫາສໍາຄັນບູລິມະສິດ ແລະ ຈະສືບຕໍ່ໃຫ້ການຮ່ວມມືຕໍ່ກັບແຜນການຈັດຕັ້ງປະຕິບັດ ເພື່ອສາມາດດໍາເນີນການຈັດຕັ້ງປະຕິບັດໃນຕໍ່ໜ້າ ແລະ ເສີມສ້າງຄວາມເຂັ້ມແຂງທາງດ້ານຂະແໜງການເງິນ ແລະ ທະນາຄານກາງອາຊຽນ ລວມທັງເປັນຕາໜ່າງປ້ອງກັນການເກີດວິກິດການທາງການເງິນໃຫ້ພາກພື້ນອາຊຽນ+3 ຢ່າງມີປະສິດພາບ. ສໍາລັບກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ຄັ້ງທີ່ 14 ແລະ ກອງປະຊຸມປິ່ນອ້ອມອື່ນໆ ແມ່ນຈະໄດ້ຈັດຂຶ້ນທີ່ ສິງກະໂປ ໃນປີ 2027.